


# ສາຂາ ທຫລ ພາກກາງ ແຂວງສະຫວັນນະເຂດ ສ້າງຂະບວນການເຕະບານຊາຍມິດຕະພາບ ເພື່ອຂໍ່ານັບຮັບຕ້ອນ ວັນສ້າງຕັ້ງ ສະຫະພັນກຳມະບານລາວ ຄົບຮອບ 62 ປີ



ໃນຕອນແລງຂອງວັນທີ 21 ກຸມພາ 2018 ເວລາ 17:00 ໂມງທີ່ຜ່ານມາ ຢູ່ທີ່ເດີ່ນກິລາ BL ໄດ້ມີການສ້າງຂະບວນການກິລາບານເຕະຊາຍມິດຕະພາບຂຶ້ນ ລະຫວ່າງ "ທີມບານເຕະຊາຍ ສາຂາ ທຫລ ພາກກາງ" ພົບກັບ "ທີມບານເຕະຊາຍ ຫ້ອງວ່າການປົກຄອງແຂວງສະຫວັນນະເຂດ" ເຊິ່ງໃນການສ້າງຂະບວນການກິລາມິດຕະພາບໃນຄັ້ງນີ້ ຍັງໄດ້ຮັບກຽດຢ່າງສູງ ຈາກທ່ານ ປອ ໂພໄຊ ໄຊຍະສອນ ກຳມະການສຳຮອງສູນກາງພັກ ຮອງເລຂາພັກແຂວງ ຮອງເຈົ້າແຂວງຯສະຫວັນນະເຂດ; ທ່ານ ບຸນວົງ ດວງດອກເກດ ເລຂາໜ່ວຍພັກ ຫົວໜ້າສາຂາ ທຫລ ພາກກາງ ແຂວງສະຫວັນນະເຂດ ພ້ອມດ້ວຍນັກກິລາ ແລະ ກອງເຊຍ ທັງສອງຄະນະ ເຂົ້າຮ່ວມລວມທັງໝົດ 100 ກວ່າຄົນ ຍິງ 40 ຄົນ.




ໃນເວລາຂອງການແຂ່ງຂັນໄດ້ດຳເນີນໄປດ້ວຍບັນຍາກາດອັນຟົດຟື້ນ ເບີກບານມ່ວນຊື່ນ ທີ່ເຕັມໄປດ້ວຍຄວາມສາມັກຄີຮັກແພງ ຈາກນັກກິລາ ແລະ ກອງເຊຍ ທັງສອງຄະນະ ໂດຍບໍ່ໄດ້ຄຳນຶງເຖິງຜົນຊະນະຫຼືເສຍ.

ຂ່າວ: ເດດອາລຸນ ແສນທະວົງ

ພາບ: ອະນຸສອນ ເກດຕະວົງ